**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ.....1893...../ກປ

ນະຄອນຫຼວງວຽງຈັນ, ວັນທີ...24 SEP 2020...

# ຄຳສັ່ງ

## ກ່ຽວກັບ ການເພີ່ມທະວີຄວາມເອົາໃຈໃສ່ ໃນການກວດກາການຕິດສະຫຼາກ ຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ

**ເຖິງ:** - ທ່ານ ຫົວໜ້າກົມປູກຝັງ;
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມ ກົດໝາຍ ວ່າດ້ວຍ ກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ເລກທີ 1976/ກປຝ, ລົງວັນທີ 10 ກັນຍາ 2020;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງກົມນະໂຍບາຍ ແລະ ນິຕິກຳ ເລກທີ 0712/ກບນ, ລົງວັນທີ 21 ກັນຍາ 2020.

ໃນໄລຍະທີ່ຜ່ານມາ ຂະແໜງການກະສິກຳ ແລະ ປ່າໄມ້ ໄດ້ຜັນຂະຫຍາຍກົດໝາຍ, ດຳລັດ ອອກເປັນນິຕິກຳໃຕ້ກົດໝາຍ ລວມທັງຄູ່ມືວິຊາການ ຫຼາຍສະບັບ ພ້ອມທັງໂຄສະນາເຜີຍແຜ່ໃຫ້ສັງຄົມ ໄດ້ຮັບຊາບ ແລະ ຈັດຕັ້ງປະຕິບັດ ເປັນຢ່າງດີ ໂດຍສະເພາະການຕິດສະຫຼາກ ພາຊະນະບັນຈຸຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ, ແຕ່ເຖິງຢ່າງໃດກໍຕາມ ຜ່ານການກວດກາຕົວຈິງຂອງເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຍັງພົບເຫັນການຕິດສະຫຼາກທີ່ບໍ່ຖືກຕ້ອງ ເປັນຕົ້ນ ສະຫຼາກບໍ່ເປັນພາສາລາວ, ບໍ່ມີຂໍ້ມູນ ຫຼື ເຕັກນິກການນຳໃຊ້ ເຮັດໃຫ້ເກີດຄວາມສ່ຽງຕໍ່ການນຳໃຊ້ ປັດໄຈການຜະລິດທີ່ ບໍ່ໄດ້ຄຸນນະພາບ, ເສຍຄຸນນະພາບ ແລະ ເປັນອັນຕະລາຍຮ້າຍແຮງຕໍ່ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ.

ເພື່ອແກ້ໄຂປະກົດການຫຍໍ້ທໍ້ດັ່ງກ່າວ ແລະ ຮັບປະກັນໃຫ້ຜູ້ນຳໃຊ້ຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ ໄດ້ຮັບຂໍ້ມູນຢ່າງຖືກຕ້ອງ ກ່ຽວກັບ ປະເພດ, ເຕັກນິກການນຳໃຊ້ ແລະ ການຮັກສາຄວາມປອດໄພ ນັ້ນ,

## ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເປັນເຈົ້າການ ກວດກາ ແລະ ແນະນຳໃຫ້ ຜູ້ປະກອບການ ທີ່ດຳເນີນທຸລະກິດ ກ່ຽວກັບ ຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ ເອົາໃຈໃສ່ໃນການຕິດສະຫຼາກໃຫ້ຖືກຕ້ອງຕາມລະບຽບການ ດັ່ງນີ້:
   1.1 ການຜະລິດ ຫຼື ນຳເຂົ້າ ເພື່ອຈຳໜ່າຍ ຕ້ອງຕິດສະຫຼາກເປັນພາສາລາວ ຫຼື ໃນກໍລະນີທີ່ຜູ້ປະກອບການຕ້ອງການຮັກສາເນື້ອໃນພາສາຕ່າງປະເທດໄວ້ ກໍໃຫ້ເຮັດເປັນສອງພາສາ ມີທັງ ພາສາລາວ ແລະ ພາສາຕ່າງປະເທດ ໂດຍໄດ້ຮັບການຮັບຮອງຈາກກົມປູກຝັງ ບົນພື້ນຖານ ເງື່ອນໄຂ ດັ່ງນີ້:

- ເນື້ອໃນຂອງສະຫຼາກທີ່ເປັນພາສາລາວ ຕ້ອງຖືກກັບເນື້ອໃນຂອງສະຫຼາກທີ່ເປັນພາສາຕ່າງປະເທດ;
- ການພິມໜັງສືໃສ່ພາຊະນະບັນຈຸ ຕ້ອງຈະແຈ້ງ ແລະ ອ່ານອອກງ່າຍ;
- ຂະໜາດຂອງສະຫຼາກ ຕ້ອງກວມ ສາມສ່ວນສີ່ ຂອງເນື້ອທີ່ພາຊະນະບັນຈຸ;
- ພາຊະນະບັນຈຸທີ່ເປັນ ກະເປົາ ຫຼື ຊອງ ຕ້ອງພິມໃສ່ທັງສອງດ້ານ, ຖ້າເປັນພາຊະນະບັນຈຸທີ່ເປັນ ກະຕຸກ ຫຼື ແກ້ວ ແມ່ນໃຫ້ພິມໃສ່ເຈ້ຍສະຕິກເກີຕິດໃສ່ ແລະ ໃນກໍລະນີທີ່ບໍ່ສາມາດພິມໃສ່ພາຊະນະບັນຈຸທີ່ເປັນ ກະຕຸກ ຫຼື ຊອງ ຕ້ອງມີສະຫຼາກແນບຕິດໄປກັບພາຊະນະບັນຈຸ.

1.2 ສໍາລັບການນໍາເຂົ້າ ເພື່ອຄົ້ນຄວ້າທົດລອງ, ຊ່ວຍເຫຼືອການລະບາດຂອງສັດຕູພືດ ແລະ ຮັບໃຊ້ໃນກິດຈະການທີ່ໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ແມ່ນໃຫ້ຍົກເວັ້ນການຕິດສະຫຼາກ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 1.1 ຂອງຄໍາສັ່ງສະບັບນີ້, ແຕ່ຕ້ອງມີຂໍ້ມູນ ກ່ຽວກັບ ຊື່, ທີ່ຢູ່ ແລະ ເບີໂທລະສັບຂອງຜູ້ນໍາເຂົ້າ ຕິດໃສ່ພາຊະນະບັນຈຸ ພ້ອມທັງພິມຂໍ້ຄວາມ "ຫ້າມຈໍາໜ່າຍ" ແລະ ເລກທີໃບທະບຽນຝຸ່ນ, ຢາປາບສັດຕູພືດ ຫຼື ເມັດພັນພືດ ທີ່ສາມາດເຫັນຊັດເຈັນ ແລະ ອ່ານອອກງ່າຍ.

2. ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຊີ້ນໍາຂະແໜງປູກຝັງ, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແລະ ດ່ານກັກກັນພືດ ເອົາໃຈໃສ່ ກວດກາການຕິດສະຫຼາກ ແລະ ການສະໜອງປັດໄຈການຜະລິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

2.1 ການນໍາເຂົ້າ ແລະ ການຈໍາໜ່າຍ ຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ ໃຫ້ກວດກາຄືນການຕິດສະຫຼາກເປັນພາສາລາວ ແລະ ມີເນື້ອໃນສອດຄ່ອງກັບແບບສະຫຼາກ ທີ່ໄດ້ຮັບຮອງຈາກກົມປູກຝັງ ພ້ອມທັງນໍາໃຊ້ມາດຕະການຢ່າງເດັດຂາດຕໍ່ຜູ້ລະເມີດ ເປັນຕົ້ນ
- ການລັກລອບນໍາເຂົ້າ;
- ການຈໍາໜ່າຍ ໂດຍມີການຖ່ຽນຖ່າຍປັດໄຈການຜະລິດ ຈາກພາຊະນະບັນຈຸເດີມໄປໃສ່ພາຊະນະບັນຈຸອື່ນ ຫຼື ມີການຫຸ້ມຫໍ່ຄືນໃໝ່;
- ການແບ່ງຂາຍ ແລະ ໃຊ້ພາຫານະຂົນສົ່ງ, ແຈກຢາຍ ຫຼື ນໍາໃຊ້ແບບຊະຊາຍ;
- ການດັດແປງເນື້ອໃນຂອງສະຫຼາກ ເຊັ່ນ: ຕັດ ຫຼື ເພີ່ມ ຂໍ້ມູນອື່ນໃສ່ໂດຍບໍ່ໄດ້ຮັບອະນຸຍາດ ເປັນຕົ້ນ ຂໍ້ຄວາມທີ່ຂຽນວ່າ "ອັນຕະລາຍຕໍ່າ", "ປອດໄພ", "ບໍ່ເປັນພິດ", "ບໍ່ເບື່ອ", "ອັນຕະລາຍໜ້ອຍ", "ບໍ່ອັນຕະລາຍ", "ປອດສານພິດ", "ສະມັດຕະພາບຂອງຜົນຜະລິດສູງ", "ກໍາໄລດີ" ຫຼື ຂໍ້ຄວາມອື່ນ ທີ່ແອບອ້າງຜົນການຄົ້ນຄວ້າ ຫຼື ນໍາໃຊ້ຄໍາສັບວິທະຍາສາດສະເພາະດ້ານເກີນຄວາມເປັນຈິງ;
- ຈໍາໜ່າຍ ຫຼື ແຈກຢາຍຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ ທີ່ໄດ້ຮັບອະນຸຍາດໃຫ້ນໍາໃຊ້ໃນກິດຈະການສົ່ງເສີມການລົງທຶນ ຊຶ່ງບໍ່ສອດຄ່ອງກັບເງື່ອນໄຂການອະນຸຍາດ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 1.2 ຂອງຄໍາສັ່ງສະບັບນີ້.

3. ເມື່ອເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ພົບເຫັນຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ ບໍ່ໄດ້ຕິດສະຫຼາກ ຫຼື ຕິດສະຫຼາກບໍ່ຖືກຕ້ອງຕາມເງື່ອນໄຂ ທີ່ໄດ້ກໍານົດໄວ້ຂໍ້ 1 ຂອງຄໍາສັ່ງສະບັບນີ້ ໃຫ້ກັກປັດໄຈການຜະລິດດັ່ງກ່າວໄວ້ໃນບໍລິເວນໃດໜຶ່ງ ເພື່ອດໍາເນີນການກວດກາ ແລະ ພິສູດເອກະສານຢັ້ງຢືນຮັບຮອງສະຫຼາກ ແລະ ການຂຶ້ນທະບຽນວິຊາການ ພ້ອມທັງສະເໜີພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ນໍາໃຊ້ມາດຕະການຕໍ່ຜູ້ລະເມີດຕາມແຕ່ລະກໍລະນີ ດັ່ງນີ້:

3.1 ລະເມີດຄັ້ງທີ 1 ໃຫ້ກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ເຊັນຮັບຮູ້ການລະເມີດ ພ້ອມທັງກໍານົດວິທີການແກ້ໄຂຮ່ວມກັນ; ໃນກໍລະນີບໍ່ມີເອກະສານຢັ້ງຢືນ ແລະ ຮັບຮອງການຂຶ້ນທະບຽນ ຕ້ອງຍຶດ ແລະ ນໍາສົ່ງຕົວຢ່າງເຖິງກົມປູກຝັງ ເພື່ອວິໄຈຄຸນນະພາບ ແລະ ຄວາມປອດໄພ ຂອງຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ ໂດຍໃຫ້ຜູ້ລະເມີດຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ;

3.2 ລະເມີດຄັ້ງທີ 2 ຈະຖືກຢຶດປັດໄຈການຜະລິດ ແລະ ຖືກປັບໃໝ ໜຶ່ງເທົ່າ ຂອງມູນຄ່າ ຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ ພ້ອມທັງ ໂຈະໃບທະບຽນ ຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ ຈົນກວ່າຈະມີການແກ້ໄຂຕາມຄຳແນະນຳໃນບົດບັນທຶກ ຂອງເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;

3.3 ລະເມີດຄັ້ງທີ 3 ຈະຖືກຢຶດປັດໄຈການຜະລິດ ແລະ ຖືກປັບໃໝ ໜຶ່ງເທົ່າ ຂອງມູນຄ່າ ຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ ພ້ອມທັງ ຖອນໃບທະບຽນ ຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ.

4. ໃຫ້ ກົມປູກຝັງ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຮີບຮ້ອນໂຄສະນາເຜີຍແຜ່ຄຳສັ່ງສະບັບນີ້ ໃຫ້ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ, ຜູ້ປະກອບການ, ດ່ານນຳເຂົ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບຢ່າງທົ່ວເຖິງ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານການນຳກະຊວງກະສິກຳ ແລະ ປ່າໄມ້ ຮັບຊາບຢ່າງເປັນປົກກະຕິ ເພື່ອຫາວິທີແກ້ໄຂຢ່າງທັນການ.

5. ຄຳສັ່ງສະບັບນີ້ ມີຜົນສັກສິດນັບ ແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີ**

ປອ.ລຽນ ທິແກ້ວ